ເຖິງບັນດາທ່ານທີ່ໄດ້ຕິດເຊື້ອພະຍາດໂຄວິດ-19ສາຍພັນໃໝ່ໃນສະຖານທີ່ເຮັດວຽກ

ໃນກໍລະນີ ທ່ານໄດ້ຕິດເຊື້ອພະຍາດໂຄວິດ-19ໃນໜ້າທີ່ການເຮັດວຽກ,

## ທ່ານຈະເປັນຢູ່ໃນກຸ່ມເປົ້າໝາຍທີ່ສາມາດຂໍຮ້ອງເພື່ອໄດ້ຮັບເງິນການປະກັນໄພການຊົດເຊີຍອຸປະຕິເຫດຂອງຜູ້ອອກແຮງງານ

## ເປັນໃນກຸ່ມເປົ້າໝາຍແມ່ນກໍລະນີຄືແນວໃດ?

■ ໃນກໍລະນີເສັ້ນທາງການຕິດແລະແຜ່ລະບາດເຊື້ອພະຍາດໂຄວິດ-19ແມ່ນໃນໜ້າທີ່ການເຮັດວຽກຢ່າງແນ່ນອນ

■ ເຖິງແມ່ນວ່າເສັ້ນທາງການຕິດເຊື້ອແລະແຜ່ລະບາດເຊື້ອພະຍາດໂຄວິດ-19 ແມ່ນບໍ່ແນ່ນອນກໍຕາມ,ກໍລະນີຜູ້ກ່ຽວແມ່ນປະກອບອາຊີບໜ້າທີ່ວຽກງານທີ່ມີຄວາມສ່ຽງສູງ※, ມີຄວາມເປັນໄປໄດ້ຫລາຍທີ່ໄດ້ຕິດເຊື້ອພະຍາດນີ້

※(ຕົວຢ່າງທີ1)ວຽກງານຢູ່ພາຍໃຕ້ສະພາບສິ່ງແວດລ້ອມແຮງງານທີ່ໄດ້ຖືກກວດພົບຜູ້ຕິດເຊື້ອພະຍາດໂຄວິດ-19ມີຈໍານວນ ຫລາຍຄົນ

※(ຕົວຢ່າງທີ2)ວຽກງານຢູ່ພາຍໃຕ້ສະພາບສິ່ງແວດລ້ອມແຮງງານທີ່ມີໂອກາດໄດ້ໃກ້ຊິດແລະສໍາຜັດລູກຄ້າຫລາຍ

■ ສໍາລັບທ່ານໝໍແພດ,ພະຍາບານແລະຜູ້ຊ່ວຍເບິ່ງແຍງຄົນເຈັບ ແມ່ນ ຕາມຫລັກການແລ້ວເຊິ່ງເປັນຢູ່ໃນກຸ່ມເປົ້າໝາຍ ຍົກເວັ້ນກໍລະນີທີ່ມີຄວາມແນ່ນອນວ່າ ການຕິດເຊື້ອນີ້ເກີດຂຶ້ນ ໃນນອກເວລາການເຮັດວຽກ

ທ່ານສາມາດສອບຖາມຂໍ້ມູນລະອຽດຈາກQ & A ໃນເວັບໄຊທຂອງກະຊວງສາທາລະນະສຸກແລະແຮງງານ

ກະລຸນາເບິ່ງ(ຂໍ້ "ການຊົດເຊີຍອຸປະຕິເຫດຂອງຜູ້ອອກແຮງງານ") ▶

## ປະເພດຂອງການປະກັນໄພການຊົດເຊີຍອຸປະຕິເຫດຂອງຜູ້ອອກແຮງງານ

ຜູ້ອອກແຮງງານທີ່ໄດ້ຕິດເຊື້ອພະຍາດໂຄວິດ-19ສາຍພັນໃໝ່ຈາກມີການເຮັດວຽກໜ້າທີ່ແລະຄອບຄົວຂອງຜູ້ເສຍຊີວິດຈາກໂຄວິດ-19 ແມ່ນ ສາມາດຮັບເງິນຈາກ ການປະກັນໄພການຊົດເຊີຍອຸປະຕິເຫດຂອງຜູ້ອອກແຮງງານໄດ້,ເຖິງແມ່ນວ່າ ຮູບແບບການວ່າຈ້າງຂອງຜູ້ກ່ຽວແມ່ນ ຢູ່ໃນຮູບແບບໃດກໍຕາມ ຄື: ພະນັກງານປະຈໍາ,ພະນັກງານວຽກເສີມ, ພະນັກງານເຮັດວຽກບໍ່ເຕັມເວລາ.

## ການໃຫ້ການຊົດເຊີຍການປິ່ນປົວ

① ຖ້າວ່າທ່ານໄດ້ຮັບການກວດຢູ່ສະຖາບັນການແພດທີ່ຮັບເອົາຄົນເຈັບໄພແຮງງານ,ຕາມຫລັກການແລ້ວ

ທ່ານສາມາດໄດ້ຮັບການປິ່ນປົວໂດຍບໍ່ຕ້ອງເສຍເງິນ.

② ໃນກໍລະນີ,ທ່ານໄດ້ໄປໂຮງໝໍເພື່ອປິ່ນປົວທີ່ບໍ່ແມ່ນ ສະຖາບັນການແພດທີ່ຮັບຄົນເຈັບໄພແຮງງານ,ທ່ານຈະເປັນຜູ້ອອກຄ່າປິ່ນປົວກ່ອນ,ພາຍຫລັງທ່ານກໍສາມາດຮຽກຮ້ອງຄ່າປະກັນໄພແຮງງານໄດ້ ລັດຖະບານຈະສໍາລະຈ່າຍຄ່າປິ່ນປົວຄືນໃຫ້ໃນຈໍານວນທັງໝົດທີ່ທ່ານໄດ້ຈ່າຍໄປແລ້ວ.

## ການໃຫ້ການຊົດເຊີຍການຢຸດພັກເຊົາວຽກງານຊົ່ວຄາວ

ໃນກໍລະນີ ບໍ່ໄດ້ຮັບຄ່າຈ້າງ ຍ້ອນວ່າ ມາເພື່ອປິ່ນປົວພະຍາດ ບໍ່ສາມາດເຮັດວຽກໄດ້,ທ່ານສາມາດຮັບເງິນການຊົດເຊີຍການຢຸດພັກເຊົາວຽກງານຊົ່ວຄາວໄດ້.

■ ມື້ເບີກລາຍຈ່າຍເງິນ: ຕັ້ງແຕ່ມື້ທີ4ທີ່ທ່ານໄດ້ຢຸດພັກເຊົາວຽກງານຊົ່ວຄາວແລ້ວ

■ ຈໍານວນເງິນທີ່ຈະຈ່າຍ: ຕໍ່ການຢຸດພັກເຊົາວຽກງານວັນໜຶ່ງ,ລັດຖະບານຈະຈ່າຍ80%ຂອງຈໍານວນເງິນໃນໜຶ່ງວັນແບບພື້ນຖານທີ່ຈະຈ່າຍໃຫ້(ລວມທັງ20%ຂອງເງິນທີ່ຈ່າຍພິເສດ)

＊ຕາມຫລັກການແລ້ວ "ຈໍານວນເງິນໃນໜຶ່ງວັນແບບພື້ນຖານທີ່ຈະຈ່າຍໃຫ້"ແມ່ນມີການຄິດໄລ່ແມ່ນຄື: ຄ່າຈ້າງລວມທັງໝົດໃນໄລຍະ3ເດືອນກ່ອນມື້ທີ່ມີອາການໂລກໂຄວິດ-19ເກີດຂຶ້ນ ຫານຈໍານວນມື້ທັງໝົດຕາມໃນປະຕິທິນ ເທົ່າກັບ ຈໍານວນເງິນໃນໜຶ່ງວັນແບບພື້ນຖານທີ່ຈະຈ່າຍໃຫ້

## ການໃຫ້ການຊົດເຊີຍແກ່ຄອບຄົວຜູ້ເສຍຊີວິດ

ຄອບຄົວຜູ້ເສຍຊີວິດ ຂອງ ຜູ້ອອກແຮງງານ ຍ້ອນວ່າ ໜ້າທີ່ໃນການເຮັດວຽກ ໄດ້ຕິດເຊື້ອພະຍາດໂຄວິດ-19 ແມ່ນສາມາດຮັບເງິນ ເບັ້ຍບໍານານການຊົດເຊີຍຄອບຄົວຜູ້ເສຍຊີວິດ,ເງິນຊົ່ວຄາວເພື່ອຊົດເຊີຍ ຄອບຄົວຜູ້ເສຍຊີວິດ.

■ ກະລຸນາສອບຖາມ ກົມແຮງງານ,ຫ້ອງການກວດກາມາດຕະການແຮງງານ ▶

ກະຊວງສາທາລະນະສຸກແລະແຮງງານ,ກົມແຮງງານຂັ້ນແຂວງ,ຫ້ອງການກວດກາມາດຕະການແຮງງານ (ເດືອນ11 ປີ2020)